ບໍລິສັດ ຫຸ້ນສ່ວນລົງທຶນ ດັກລັກຣັບເບີ (DRI)

ບໍລິສັດ ດັກລັກຣັບເບີ ຈຳກັດ (DAKLAORUCO)

# ບົດລາຍງານຜົນສະຫຼຸບ

# ການສຳພາດບັນດາພາກສ່ວນກ່ຽວຂ້ອງ ປະຈຳປີ2025

*ປາກເຊ, ເດືອນ 04 ປີ 2025*

## ໜ່ວຍງານທີ່ປຶກສາດ້ານເຕັກນິກ

## ສະຖາບັນຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຢັ້ງຢືນປ່າໄມ້

**Sustainable Forest Management and Forest Certification Institute (SFMI)**

PHÓ VIỆN TRƯỞNG

TS. *Đào Công Khanh*

ທີມງານປະຕິບັດການສຳພາດ

*ປອ. ດ່າວກົງແຄ້ງ*

*ປທ. ເຈິ່ນດຶກບິ່ງ*

*ປທ. ຫງວຽນຖຸ່ຍລິນ*

*ປທ. ຮວ່າງວັນມິງ*

*ວສກ. ຫງວຽນບ໋າກ່ວຽນ*

*ທ່ານນາງ ຈັນສຸກ ໄຊຍະສິດ*

*ທ່ານນາງ ຟານທິທູຮ່າ*

*ທ່ານ ຟ້າມວັນນາມ*

## I. ຂໍ້ມູນທົ່ວໄປ

### 1. ຈຸດປະສົງຂອງກິດຈະກໍາການສໍາພາດ

- ສົມທົບກັບວຽກງານການປະເມີນພາຍໃນ, ສໍາພາດເພີ່ມເຕີມພາຍຫຼັງໄດ້ມີຜົນການສໍາພາດໃນເດືອນ2/2024, ເກັບກໍາຂໍ້ມູນ ຄໍາຄິດເຫັນຈາກພາກສ່ວນກ່ຽວຂ້ອງກ່ຽວກັບຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຈາກການເຄື່ອນໄຫວຄຸ້ມຄອງແຮງງານ, ຊຸມຊົນທ້ອງຖິ່ນ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງກັບປ່າໄມ້ ແລະ ຊີວະນາໆພັນ. ປະເມີນຜົນກະທົບທາງບວກ ແລະ ທາງລົບ ຈາກນະໂຍບາຍຂອງບໍລິສັດໃນພາກປະຕິບັດຕົວຈິງ;
- ຮັບເອົາທຸກຄໍາສະເໜີຂອງພາກສ່ວນກ່ຽວຂ້ອງ, ແນໃສ່ເພື່ອປັບປຸງວຽກງານບໍລິຫານ ມຸ່ງໄປເຖິງ ເປົ້າໝາຍຄວາມຍືນຍົງທາງດ້ານເສດຖະກິດ-ສັງຄົມ-ສິ່ງແວດລ້ອມ ຕາມແນວທາງ FSC ແລະ ອົງການສິ່ງແວດລ້ອມໂລກ.

### 2. ພາກສ່ວນຄະນະສໍາພາດ

#### a. ບໍລິສັດ Daklaoruco

- ທ່ານນາງ ຈັນສຸກ ໄຊຍະສິດ — ຮອງຫົວໜ້າ ຫ້ອງການບໍລິສັດ
- ທ່ານນາງ ຟານທິທູຮ່າ — ພະນັກງານຫ້ອງການ ບສ
- ທ່ານ ຟ້າມວັນນາມ — ຫົວໜ້າຫ້ອງເຕັກນິກ ບສ

ພ້ອມດ້ວຍຄະນະນໍາ ແລະ ພະນັກງານວິຊາການເຕັກນິກ ນິຄົມ 1, 2, 3 ແລະ 4.

#### b. ໜ່ວຍບໍລິການທີ່ປຶກສາ

- ປອ. ດ່າວກົງແຄັງ — ຮອງຫົວໜ້າສະຖາບັນ SFMI. ຫົວໜ້າທີ່ປຶກສາ
- ປທ. ເຈິ່ນດຶກບິ່ງ — ຊ່ຽວຊານຄຸ້ມຄອງປ່າໄມ້ຍືນຍົງແລະຊີວະນານາພັນ
- ປທ. ຫງວຽນຖຸ່ຍລິນ — ຊ່ຽວຊານຄຸ້ມຄອງປ່າໄມ້ຍືນຍົງ ແລະ EIA&SIA
- ປທ. ຮວ່າງວັນມິງ — ຊ່ຽວຊານ GIS ແລະຊີວະນານາພັນ
- ວສກ. ຫງວຽນບ່າກ່ວຽນ — ຊຊ.ຄຸ້ມຄອງປ່າໄມ້ຍືນຍົງແລະສືບສວນປ່າໄມ້

### 3. ເປົ້າໝາຍສໍາພາດ

- ພະນັກງານຂອງບໍລິສັດ (ຫ້ອງການແຕ່ລະນິຄົມ,ແຕ່ລະຈຸແລະແຮງງານ(ປ້ອງກັນ,ກໍາມະກອນຂີດຢາງ);
- ການນໍາແຕ່ລະບ້ານທີ່ນອນໃນເຂດໂຄງການຂອງບໍລິສັດ;

- ການນຳ ແລະ ວິຊາການຂອງບັນດາພະແນກການທີ່ຂຶ້ນກັບພະແນກກະສິກຳປ່າໄມ້, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ຂອງ2ແຂວງ ຈຳປາສັກ ແລະ ສາລະວັນ .

**4. ເນື້ອໃນການສຳພາດ**

- ຜົນກະທົບທາງບວກ ແລະ ລົບຕໍ່ສິ່ງແວດລ້ອມ, ນິເວດວິທະຍາ ແລະ ສັງຄົມ ຕໍ່ຜູ້ອອກແຮງງານ ແລະ ປະຊາຊົນທ້ອງຖິ່ນ ໃນເຂດດັ່ງກ່າວ ຈາກການເຄື່ອນໄຫວບໍລິຫານຂອງບໍລິສັດໃນໄລຍະຜ່ານມາ;
- ວຽກງານການປະຕິບັດຕາມລະບຽບການ ຫຼື ການລະເມີດກົດໝາຍຂອງລັດ, ສະພາແຫ່ງຊາດ ແຫ່ງ ສປປ ລາວ ຫຼື ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຂອງບໍລິສັດ Daklaoruco;
- ການປະກອບສ່ວນ (ໃນທາງບວກ) ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປ້ອງສິ່ງແວດລ້ອມ ຈາກການເຄື່ອນໄຫວບໍລິຫານຂອງບໍລິສັດ;
- ຄວາມສົມເຫດສົມຜົນ / ຄວາມບໍ່ສົມເຫດສົມຜົນຂອງນະໂຍບາຍການຮັບສະໝັກແຮງງານແລະນະໂຍບາຍດ້ານວັດຖຸ, ແນວຄິດແລະສຸຂະພາບທີ່ບໍລິສັດກຳລັງນຳໃຊ້ກັບແຮງງານຂອງຕົນ.

**5. ຂອບເຂດການສຳພາດ** *(ເບິ່ງລາຍລະອຽດໃນເອກະສານຊ້ອນທ້າຍ 1)*

- ແຮງງານຢູ່ 04 ນິຄົມ (ສຸ່ມຕົວຢ່າງ);
- ພະນັກງານຂອງ04ນິຄົມ (ສຸ່ມຕົວຢ່າງທີ່ເປັນພະນັກງານສົມບູນ, ພະນັກງານທີ່ເຮັດວຽກໄລຍະຍາວຂອງບໍລິສັດ);
- ການນຳ 08 ບ້ານໃນເຂດໂຄງການຂອງບໍລິສັດ (ສຸ່ມຕົວຢ່າງ);
- ການນຳ ແລະ ວິຊາການ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະສິກຳ ປ່າໄມ້ ທີ່ຂຶ້ນກັບ 2 ແຂວງ ຈຳປາສັກ ແລະ ສາລະວັນ (ແຕ່ລະແຂວງ 2 ພະແນກ).

**6. ໄລຍະເວລາປະຕິບັດ**

- ສຳພາດແຮງງານຢູ່ 04 ນິຄົມ: 4 ວັນ 19, 20, 21 ແລະ 22/4/2025;
- ການສຳພາດກັບພາກສ່ວນກ່ຽວຂ້ອງທ້ອງຖິ່ນ: 2 ວັນ, 22 ແລະ 23/4/2025.

## II. ການສັງລວມຄວາມຄິດເຫັນໃນການສຳພາດ ບັນດາພາກສ່ວນທີ່ກ່ຽວຂ້ອງ

## 1. ແຮງງານບໍລິສັດ

### 1.1. ພະນັກງານ (ພະນັກງານຂອງບໍລິສັດ)



- ການປະກອບຊຸດປ້ອງກັນແຮງງານສຳລັບກຳມະກອນຂີດຢາງໄດ້ຮັບການປັບປຸງ. ກຳມະກອນຂີດຢາງໄດ້ຮັບ: ເສື້ອ + ມີດຂີດຢາງ + ຄຸໃສ່ຢາງ + ໝວກ + ໄຟສາຍ + ເສື້ອກັນຝົນ + ເກີບໂບກ.
- ນະໂຍບາຍພິເສດ ແລະ ເງິນອຸດໜູນໄດ້ເພີ່ມຂຶ້ນ:

- ເງິນອຸດໜູນສຳລັບຄະນະບ້ານເພີ່ມຂຶ້ນ;
- ທຸກໆປີ, ເມື່ອກຳມະກອນຂີດຢາງບັນລຸການຜະລິດແລະມີສີມືຂີດຢາງດີ, ບໍລິສັດກໍຈະມີເຄື່ອງບໍລິໂພກທີ່ຈຳເປັນມອບໃຫ້. ແຕ່ວ່າ, ໃນປີນີ້, ກຳມະກອນຂີດຢາງທັງໝົດ ແມ່ນຈະໄດ້ຮັບການຊ່ວຍເຫຼືອດ້ານເຄື່ອງບໍລິໂພກທີ່ຈຳເປັນໝົດທຸກຄົນ ແລະ ກຳມະກອນທີ່ໄດ້ ເກີນເປົ້າການຜະລິດ ຈະໄດ້ຮັບເພີ່ມ ປາປ໋ອງ 2 ກະປ໋ອງ + ນ້ຳມັນພືດ 1 ຕຸກ+ ນົມຂຸ້ນ 1 ກະປ໋ອງ;
- ກຳມະກອນຂີດ 1 ວັນ, ຈະໄດ້ຮັບເງິນອຸດໜູນເພີ່ມ 25,000 ກີບ/ມື້ ( ຄວາມຂະຫຍັນ + ນ້ຳມັນລົດ + ອາຫານວ່າງ );
- ໃນປີ 2025, ນິຄົມ1 ມີແຮງງານທັງໝົດ 667 ຄົນ, ໃນນັ້ນ ມີກຳມະກອນ 130 ຄົນ ທີ່ກັບເຂົ້າມາເຮັດວຽກຄືນແລະໄດ້ເຂົ້າຮ່ວມກອງທຶນປະກັນສັງຄົມ (ກວມ 19%);



- ກຳມະກອນ ຍັງໄດ້ຮັບຜົນປະໂຫຍດເພີ່ມເຕີມຄື: ຂອງຂວັນວັນປີໃໝ່, ງານເປີດລະດູຂຶດຢາງ, ງານເຜີຍແຜ່ນະໂຍບາຍຕ່າງໆທີ່ບໍລິສັດວາງອອກ, ວັນແຮງງານສາກົນ 1/5, 2/12, 1/1 ແລະ ພິເສດ ຖ້າມາເຮັດວຽກໃນວັນພັກເທດສະການຕ່າງໆເຫຼົ່ານັ້ນ ກຳມະກອນກໍຈະໄດ້ຮັບເງິນອຸດໜູນພິເສດເພີ່ມເຕີມ;

- ພະນັກງານຂອງບໍລິສັດໄດ້ຮັບເງິນອຸດໜູນຄ່າໂທລະສັບ + ນ້ຳມັນລົດໃນທຸກເດືອນ;
- ໃນຕົ້ນລະດູຂຶດຢາງ, ໄດ້ຮັບການຝຶກອົບຮົມຂຶດຢາງສຳລັບແຮງງານໃໝ່ ແລະ ທົດສອບສີມືຄົນເກົ່າຄືນ (ມີການຝຶກອົບຮົມກ່ຽວກັບການປ້ອງກັນອັກຄີໄພ, ທັກສະສີມືແຮງງານ, ລະບຽບຄວາມປອດໄພແຮງງານ, ລະບຽບການຕ່າງໆຂອງບໍລິສັດ .....);
- ແຕ່ລະປີ, ຕຳຫຼວດກຸ່ມ ຈະເຮັດບັນຊີຜູ້ຢູ່ອາໄສ ແລະ ເກັບຄ່າຄຸ້ມຄອງພັກເຊົາຕາມລະບຽບ;
- ຄ້າຍພັກຂອງແຮງງານມີຄວາມສະອາດຂຶ້ນກວ່າເກົ່າ, ມີການຕັກເຕືອນບອກແຮງງານທຸກຄົນຮັກສາຄວາມສະອາດເປັນປະຈຳ;
- ນັບຕັ້ງແຕ່ໄດ້ຮັບການຢັ້ງຢືນ FSC, ບັນຫາສິ່ງແວດລ້ອມແລະສຸຂະອະນາໄມໄດ້ຮັບຄວາມເອົາໃຈໃສ່ຫຼາຍຂຶ້ນ.

### 1.2. ກຳມະກອນ (ກຳມະກອນຂຶດຢາງ)



- ໄດ້ຮັບອຸດໜູນເປັນເຄື່ອງບໍລິໂພກຈໍາເປັນໃນແຕ່ລະເດືອນ ແລະ ໄດ້ຮັບເງິນອຸດໜູນເຮັດວຽກມື້ລະ 25,000 ກີບ/ມື້. ເງິນອູດໜູນແມ່ນໄດ້ຮັບໃນທຸກທ້າຍອາທິດ. ຜົນປະໂຫຍດສໍາລັບກໍາມະກອນແມ່ນດີຂຶ້ນຫຼາຍ;
- ກໍາມະກອນເຂົ້າໃຈຫຼາຍຂຶ້ນ ເລື່ອງປະກັນສັງຄົມ ປະກັນສຸຂະພາບ;
- ກໍາມະກອນຮູ້ວ່າຊຸດປະຖົມພະຍາບານຢູ່ໃສເມື່ອຕ້ອງການ;
- ໃນຕົວຈິງ, ຈໍານວນຫ້ອງພັກຍັງບໍ່ພຽງພໍ, ແຮງງານຈໍານວນໜຶ່ງກໍມາເຊົ່າເຮືອນຢູ່ໃນບ້ານ;
- ຍ້ອນວ່າ ເຮືອນພັກໃນແຄ້ມ ມີຄວາມແອອັດ, ດັ່ງນັ້ນຈຶ່ງບໍ່ມີນໍ້າສະອາດໃຊ້ພຽງພໍ, ສະນັ້ນ ຄົນງານບາງຄົນຈຶ່ງໃຊ້ນໍ້າຫ້ວຍ ແລະເກີດມີອາການຜື່ນຄັນ;
- ບໍ່ມີສັນຍານໂທລະສັບ;
- ມັກຈະຖືກແມງງອດ ແລະ ຂີ້ເຂັບກັດຕອດ → ແກ້ໄຂເອງ
- ເສັ້ນທາງຈາກເຂດທີ່ຢູ່ອາໄສໄປຫາສວນຢາງແມ່ນມີຫີນຈຶ່ງມີຄວາມຫຍຸ້ງຍາກໃນການເດີນທາງ.

### 1.3. ຄໍາສະເໜີຈາກກໍາມະກອນຜູ້ອອກແຮງງານ

- ສະເໜີຂໍເງິນອຸດໜູນເພີ່ມເຕີມໃນລະດູການຂີດຢາງ ເນື່ອງຈາກວ່າວຽກໜັກຂຶ້ນກວ່າເກົ່າຫຼາຍ;
- ຕ້ອງການໃຫ້ປັບປຸງເຂດຫ້ອງນໍ້າ, ຫ້ອງຄົວ ແລະ ຫ້ອງນອນພັກຜ່ອນ;
- ສະເໜີສ້າງຫ້ອງນໍ້າຂອງກໍາມະກອນ, ອ່າງນໍ້າ ແລະ ປັບປຸງໄຟຟ້າ;

- ທີ່ພັກຂອງຜູ້ອອກແຮງງານ ຕ້ອງໄດ້ປັບປຸງບັນຫານ້ຳໃຊ້ຊີວິດປະຈຳວັນ ແລະ ເຈາະນ້ຳບາດານຕື່ມອີກ;
- ມີກຳມະກອນ 2 ຄົນ ຜ່ານມາ ໄດ້ເຮັດວຽກຢູ່ນິຄົມ4, ອອກຈາກນິຄົມ 4 ແລ້ວ




ລະດູຂີດປີນີ້ສະໝັກເຂົ້າມາເບັດວຽກຢູ່ນິຄົມ 2 : ຖືກຫັກເງິນຖອກປະກັນສັງຄົມ ແຕ່ບໍ່ໄດ້ຮັບບັດປະກັນສັງຄົມ, ກໍຂ້ອງໃຈ ແຕ່ໄດ້ຖາມຫົວໜ້າຈຸ ທີ່ຮັບຜິດຊອບແຕ່ຕອນນີ້ຍັງບໍ່ທັນໄດ້ຮັບບັດ. ຮຽກຮ້ອງໃຫ້ນິຄົມ, ບໍລິສັດແກ້ໄຂໂດຍໄວ;
- ເມື່ອກຳມະກອນທັງໝົດກັບຄືນມາທີ່ພັກຄົບທຸກຫ້ອງ, ໄຟຟ້າຢູ່ເຂດທີ່ພັກກໍ່ອ່ອນແຮງ, ສະນັ້ນ, →ຈຶ່ງສະເໜີໃຫ້ປັບປຸງລະບົບໄຟຟ້າ;



- ສະເໜີຊ່ວຍປັບປຸງດ້ານຫ້ອງພັກ ເນື່ອງຈາກຄອບຄົວຢູ່ຫຼາຍຄົນຈຶ່ງມີຄວາມແອອັດ;
- ສະເໜີໃຫ້ຂຸດເຈາະນ້ຳບາດານຕື່ມອີກ ເພື່ອໃຫ້ແຮງງານທີ່ຢູ່ອາໄສມີນ້ຳສະອາດພຽງພໍໃນການນຳໃຊ້;
- ໃຫ້ຊ່ວຍປະກອບເສື້ອກັນຝົນ;
- ເພີ່ມລາຄາຢາງ.
- ຊ່ວຍສະໜອງເກີບໂບກຍາວ;

- ສະເໜີສ້ອມແປງເສັ້ນທາງໄປສວນໃຫ້ເດີນທາງສະດວກສະບາຍຂຶ້ນ;
- ກໍ່ສ້າງຮົ້ວອ້ອມເຮືອນພັກ;
- ສະໜອງອຸປະກອນເພີ່ມເຕີມໃຫ້ຫົວໜ້າຈຸ (ອູ່, ເສື້ອກັນຝົນ).

## 2. ບັນດາພະແນກການປະຈຳທ້ອງຖິ່ນ

### 2.1. ບັນດາບ້ານພາຍໃນເຂດໂຄງການຂອງບໍລິສັດ

#### 2.1.1. ບ້ານລິ່ມສັກເໜືອ



- ບໍລິສັດເຄົາລົບປະເພນີແລະບູຮານສະຖານຂອງບ້ານ;
- ຊາວບ້ານສ່ວນໃຫຍ່ເຮັດວຽກຢູ່ໃນຫ້ອງການ ແລະ ຄ້າຂາຍ ດັ່ງນັ້ນເຂົາເຈົ້າຈຶ່ງບໍ່ເຂົ້າເຮັດວຽກກັບບໍລິສັດ;
- ນິຄົມໄດ້ສົ່ງເອກະສານເຖິງບ້ານກ່ຽວກັບການເກືອດຫ້າມ ບໍ່ໃຫ້ລ່າສັດປ່າຫາຍາກ ແລະ ປົກປັກຮັກສາປ່າ. →ນາຍບ້ານໄດ້ຈັດກອງປະຊຸມເຜີຍແຜ່ໃຫ້ປະຊາຊົນຮັບຮູ້ຢ່າງທົ່ວເຖິງ;
- ເຂົ້າຮ່ວມພິທີເປີດລະດູຂີດຢາງ, ການເຜີຍແຜ່ແຜນການ ແລະ ລະບຽບການຂອງບໍລິສັດ;
- ໄດ້ຮັບເງິນອຸດໜູນປະຈຳເດືອນ ແລະ ນິຄົມ ກໍເຂົ້າຮ່ວມກິດຈະກຳຂອງບ້ານ.
- **ຂໍ້ສະເໜີ:**
  - ສະເໜີຊ່ວຍ ກໍ່ສ້າງ 3 ຫ້ອງຮຽນໃຫ້ບ້ານ;



- ສະເໜີຊ່ວຍສ້ອມແປງເສັ້ນທາງຈາກບ້ານຫາບໍລິສັດນໍ້າປະປາ.

### 2.1.2. ບ້ານນາສາຍຄໍາ

- ບ້ານໄດ້ປະກາດ ແລະ ໂຄສະນາຜ່ານລໍາໂພງ ເພື່ອບໍ່ໃຫ້ປະຊາຊົນລັກຢາງ;
- ຫວ່າງມໍ່ໆມານີ້, ປະຊາຊົນໄດ້ສ້າງຮົ້ວບຸກລຸກເຂົ້າມາໃນເຂດດິນຂອງບໍລິສັດ → ນິຄົມເຫັນແລະໄດ້ແຈ້ງມຫ້ບ້ານຮັບຮູ້ →ບ້ານກໍປະສານສົມທົບກັບນິຄົມ ເພື່ອເຮັດວຽກກັບຜູ້ກ່ຽວ ຮ່ວມກັນແກ້ໄຂ;
- ບໍລິສັດໄດ້ຊ່ວຍເຫຼືອບ້ານໃນການກໍ່ສ້າງເສັ້ນທາງ, ສ້ອມແປງໂຮງຮຽນ, ສ້ອມແປງຫ້ອງການບ້ານ, ສະໜອງອຸປະກອນການຮຽນໃຫ້ນັກຮຽນ.
- **ຂໍ້ສະເໜີ:**

  - ສະເໜີໃຫ້ບໍລິສັດຊ່ວຍຊື້ປູນ ຊີມັງເທພື້ນຫ້ອງການ.

### 2.1.3. ບ້ານຫຼັກ 11

- ບໍລິສັດ ໄດ້ແຈ້ງເຜີຍແຜ່ ໃຫ້ຊາວບ້ານຮູ້ ເລື່ອງ ບໍ່ໃຫ້ລ່າສັດ ໃນເຂດປ່າຂອງບໍລິສັດ;
- ບໍລິສັດໄດ້ສະໜັບສະໜູນຊ່ວຍເຫຼືອບ້ານຢ່າງຫຼວງຫຼາຍ (ເຊັ່ນມີ ວັດຖຸ ແບະ ອຸປະກອນການຮຽນ ໜັງສືປຶ້ມຂຽນສໍາລັບນັກຮຽນ).
- **ຂໍ້ສະເໜີ:**

- ສະເໜີຊ່ວຍ ກໍ່ສ້າງເສັ້ນທາງ ແລະ ຂົວຂ້າມຫ້ວຍ.



### 2.1.4. ບ້ານສອງຫ້ອງນ້ອຍ

- ຊາວບ້ານສ່ວນໃຫຍ່ເຮັດວຽກນໍາບໍລິສັດ;
- ບໍລິສັດໄດ້ເຜີຍແຜ່ປະກາດວ່າດ້ວຍການປົກປັກຮັກສາປ່າໄມ້ ແລະ ລະບຽບການຫ້າມ ລ່າສັດພາຍໃນພື້ນທີ່ຂອງບໍລິສັດ;
- ບໍລິສັດເຮັດສັນຍາກັບນາຍບ້ານເພື່ອປົກປ້ອງພື້ນທີ່ກໍ່ສ້າງຮາກຖານ;

- ບັນດາກິດຈະກຳຂອງບໍລິສັດບໍ່ມີອັນໃດສິ່ງຜົນກະທົບຕໍ່ບ້ານ.
- **ຂໍ້ສະເໜີ:**

- ຊ່ວຍສ້ອມແປງເສັ້ນທາງແຕ່ບ້ານຫາສວນລັອກ 2.3.

### 2.1.5. ບ້ານນາແຊ

- ບໍລິສັດໄດ້ເຜີຍແຜ່ປະກາດວ່າດ້ວຍການປົກປັກຮັກສາປ່າໄມ້ ແລະ ລະບຽບການຫ້າມລ່າສັດພາຍໃນພື້ນທີ່ຂອງບໍລິສັດ;
- ເມື່ອກ່ອນ ບ້ານມີຄວາມວິຕົກກັງວົນຕໍ່ຄຸນນະພາບຂອງແຫຼ່ງນໍ້າ, ແຕ່ປະຈຸບັນຮູ້ວ່າບໍລິສັດບໍ່ໃຊ້ຢາປາບສັດຕູພືດ, ຄຸນນະພາບຂອງແຫຼ່ງນໍ້າຂອງບ້ານແມ່ນຮັບປະກັນ;
- ບໍລິສັດ ບໍ່ໄດ້ບຸກລຸກ ເຂດທີ່ດິນ ຂອງຊາວບ້ານ. ບໍລິສັດກວດສອບຄືນພື້ນທີ່. ຖ້າຊາວບ້ານບຸກລຸກທີ່ດິນຂອງບໍລິສັດ, ທາງບ້ານຈະຮ່ວມມືແກ້ໄຂ;
- ບໍລິສັດໄດ້ຊ່ວຍກໍ່ສ້າງເສັ້ນທາງ ແລະ ຂົວ.
- **ຂໍ້ສະເໜີ:**

- ສະເໜີຊ່ວຍຄ່າສ້ອມແປງເສັ້ນທາງບ້ານ (ເສັ້ນທາງໄດ້ສ້ອມແປງແລ້ວແຕ່ບ້ານຍັງຂາດທຶນຮອນໃນການຈ່າຍເງິນໃຫ້ກັບຜູ້ຮັບເໝົາ).

### 2.1.6. ບ້ານສອງຫ້ອງໃຫ່ຍ

- ບໍລິສັດໄດ້ຊ່ວຍເຫຼືອບ້ານ: ສ້າງຫ້ອງນໍ້າຢູ່ວັດ, ໂຮງຮຽນ, ສ້າງຖະໜົນຫົນທາງ, ຊ່ວຍເຫຼືອຄອບຄົວທຸກຍາກ;
- ປີ 2005, ບໍລິສັດໄດ້ປູກມັນຕົ້ນ ແລະ ແນະນຳວິທີການປູກມັນຕົ້ນໃຫ້ກັບຊຸມຊົນ;
- ກິດຈະກຳຂີດຢາງຂອງບໍລິສັດບໍ່ສິ່ງຜົນກະທົບຕໍ່ບ້ານ.

### 2.1.7. ບ້ານ ນໍ້າໃສເທິງ

- ໃນປີ 2022 ມີການຂັດແຍ້ງທີ່ດິນລະຫວ່າງນິຄົມ ກັບປະຊາຊົນ. ນິຄົມໄດ້ແຈ້ງໃຫ້ບ້ານຮັບຮູ້ →



  ບ້ານໄດ້ແຈ້ງໃຫ້ປະຊາຊົນຮັບຮູ້ຢ່າງທົ່ວເຖິງ ກ່ຽວກັບເນື້ອທີ່ເຂດດິນຂອງບໍລິສັດ ແລະ ບໍ່ໃຫ້ມີການບຸກລຸກ;
- ມີການແຈ້ງໃຫ້ບ້ານຮູ້ ຜ່ານການສົ່ງໜັງສືແຈ້ງການໃຫ້ກັບບ້ານ ກ່ຽວກັບການສ້າງແຜນຄຸ້ມຄອງປ່າໄມ້;
- ມີກໍລະນີປະຊາຊົນໃນບ້ານ ລັກຢາງບໍລິສັດ. ໃນປີ 2024, ນາຍບ້ານໄດ້ເຮັດບົດບັນທຶກຢືນຢັນກໍລະນີລັກຢາງຂອງຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ. →ນາຍບ້ານໄດ້ຜັນຂະຫຍາຍປະກາດເຖິງຊາວບ້ານ ຫ້າມເດັດຂາດ ບໍ່ໃຫ້ລັກຢາງ;

- ໃນໄລຍະ 2 ປີຜ່ານມາ,




  ບໍລິສັດໄດ້ໃຫ້ການໜູນຊ່ວຍກຳມະກອນຂີດຢາງ ຫຼາຍຂຶ້ນກວ່າແຕ່ກ່ອນ →ຊີວິດການເປັນຢູ່ທີ່ໝັ້ນຄົງຫຼາຍຂຶ້ນ →ແລະ ການລັກຢາງພາລາກໍ່ໜ້ອຍລົງເລື້ອຍໆ;
- ບໍລິສັດສະໜັບສະໜູນດ້ານພື້ນຖານໂຄງລ່າງ ແລະ ການຊ່ວຍເຫຼືອຄອບຄົວທຸກຍາກໃນບ້ານ.
- **ຂໍ້ສະເໜີ:**
  - ສະເໜີບໍລິສັດຊ່ວຍ: ດ້ານເຄື່ອງພິມ, ຄອມພິວເຕີ, ເຄື່ອງສຳເນົາເອກະສານ ສຳລັບຫ້ອງການບ້ານ;
  - ສະເໜີໃຫ້ບໍລິສັດຊ່ວຍ ຈັດສັນເນື້ອທີ່ດິນສ່ວນໜຶ່ງໃຫ້ປະຊາຊົນຂອງບ້ານ.

### 2.1.8. ບ້ານດົງຫຼວງ

- ໃນປີ 2025, ປີໃໝ່ລາວ, ບໍລິສັດໄດ້ຊ່ວຍບ້ານ 1 ລ້ານກີບ + ຂອງຂວັນ;
- ບໍລິສັດໄດ້ຊ່ວຍຈັດງານລ້ຽງປີໃໝ່ລາວໃຫ້ກັບກຳມະກອນ;
- ນິຄົມໄດ້ສົ່ງໜັງສືແຈ້ງການເຖິງບັນດາບ້ານຕ່າງໆ ເພື່ອປະສານງານ ໂຄສະນາ ຫຼຸດຜ່ອນການລັກຢາງ. ເມື່ອພົບເຫັນຄົນງານທີ່ເປັນລູກບ້ານລັກຢາງ →ນາຍບ້ານຕ້ອງປະຕິບັດຕາມລະບຽບການຂອງນິຄົມ;
- ມີເອກະສານສັນຍາກັບນິຄົມ ປະສານສົມທົບກັບນິຄົມ ໃນການປູກແລະ ຂຸດຄົ້ນ;
- ບໍລິສັດໄດ້ສົ່ງເອກະສານຮ້ອງຂໍການປະສານງານກັບບ້ານ ເພື່ອປົກປ້ອງແລວທາງນ້ຳ;
- ສະຫນັບສະຫນູນບ້ານ: ຊ່ວຍສ້າງຫລັງຄາໂຮງຮຽນ, ວາງລະບົບທໍ່ນ້ຳ, ງົວ 1 ໂຕ.
- **ຂໍ້ສະເໜີ:**

- ສະເໜີ ສ້າງເສັ້ນທາງເຂົ້າບ້ານ;
- ກໍ່ສ້າງຫ້ອງການບ້ານ;
- ຊ່ວຍປະກອບລຳໂພງໂທລະໂຄ່ງ ແລະ ຊຸດເອັມປັບສຽງເພີ່ມເຕີມໃຫ້ກັບບ້ານ.

## 2.2 ອົງການປົກຄອງທ້ອງຖິ່ນ

### 2.2.1 ພະແນກກະສິກຳ ແລະ ປ່າໄມ້ ແຂວງສາລະວັນ

- **ການປະເມີນ:**
  - ບໍລິສັດປະຕິບັດໄດ້ດີ ແລະ ໄດ້ປະຕິບັດຕາມລະບຽບກົດໝາຍຢ່າງເຄັ່ງຄັດ;
  - ກ່ອນໜ້ານີ້, ບໍລິສັດແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງກົມປູກຝັງ. ແຕ່ປີ 2023



    ໄດ້ປ່ຽນມາໃຕ້ການຄຸ້ມຄອງຂອງ ກົມປ່າໄມ້. ຢ່າງໃດກໍ່ຕາມ, ປະຈຸບັນບໍລິສັດ ຍັງບໍ່ໄດ້ຕິດຕໍ່ພົວພັນເປັນປົກກະຕິກັບພະແນກ, ພຽງແຕ່ເມື່ອມີວຽກງານຈຳເປັນ ບໍລິສັດຈຶ່ງຕິດຕໍ່ພົວພັນ;
  - ປະຈຸບັນນີ້, ຕົ້ນຢາງພາລາໄດ້ຖືກນັບເຂົ້າເປັນປ່າປົກຫຸ້ມຂອງແຂວງ;
  - ບໍລິສັດໄດ້ຂຶ້ນທະບຽນພື້ນທີ່ສວນປູກ. ແຕ່ເຖິງຢ່າງໃດກໍຕາມ, ພະແນກຍັງບໍ່ທັນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການແບ່ງຕອນດິນ ແລະ ການອອກແບບສວນດັ່ງກ່າວ;
  - ປະຈຸບັນ, ພະແນກ ດັ່ງກ່າວຍັງບໍ່ທັນໄດ້ລົງກວດກາ, ຕິດຕາມການເຄື່ອນໄຫວຕົວຈິງຢູ່ພາກສະໜາມຂອງບໍລິສັດ;
  - ໃນໄລຍະບຸກເບີກຂອງໂຄງການ, ມີການເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ. ຫຼັງຈາກນັ້ນ, ບໍລິສັດໄດ້ຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນແກ້ໄຂ. ປະຈຸບັນ, ເນື້ອທີ່ດິນ ແລະ ສວນຂອງບໍລິສັດບໍ່ມີຂໍ້ຂັດແຍ່ງໃດໆ.

- **ຂໍ້ສະເໜີ:**
  - ພະແນກຈະເກັບກຳຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ,
    →ຈັດກອງປະຊຸມກັບບັນດາບໍລິສັດພາຍໃນແຂວງ
    →ເພື່ອໂຄສະນາເຜີຍແຜ່ລະບຽບການ, ເອກະສານທີ່ກ່ຽວຂ້ອງ;
  - ພະແນກຈະລົງຕິດຕາມກວດກາເປັນປົກກະຕິເພື່ອປະເມີນຜົນການຈັດຕັ້ງປະຕິບັດຂອງບໍລິສັດ;
  - ການເຄື່ອນໄຫວນຳເຂົ້າ ແລະ ສົ່ງອອກໃນໄລຍະຈະມາເຖິງຕ້ອງມາຜ່ານພະແນກ.

### 2.2.2 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສາລະວັນ

- **ການປະເມີນ:**
  - ບໍລິສັດປະຕິບັດຕາມຂໍ້ກຳນົດຂອງກົດໝາຍ, ໄດ້ມີໃບຢັ້ງຢືນສິ່ງແວດລ້ອມ ແລະ ບໍ່ເຄີຍມີເຫດການສຸດວິໃສໃດໆເກີດຂຶ້ນດ້ານສິ່ງແວດລ້ອມ;
  - ກ່ອນການຈັດຕັ້ງປະຕິບັດໂຄງການ, ບໍລິສັດໄດ້ມີບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຕ່ປະຈຸບັນນີ້ຍັງບໍ່ອັບເດດ;
  - ການຂຸດເຈາະນໍ້າບາດານ ຫ້າມຂຸດຊະຊາຍ ເພື່ອບໍ່ໃຫ້ສົ່ງຜົນກະທົບທາງລົບເຖິງຊັບພະຍາກອນດິນ ແລະ ນໍ້າ. →ຈຳເປັນຕ້ອງມີແຜນການນຳໃຊ້ນໍ້າ, ຂຶ້ນທະບຽນ ແລະ ເສຍຄ່າທຳນຽມຕາມລະບຽບການ;
  - ສຳລັບວຽກງານຕິດຕາມກວດກາສິ່ງແວດລ້ອມ: ແຂວງດຳເນີນການ 2 ຄັ້ງ/ປີ, ເມືອງດຳເນີນການ 4 ຄັ້ງ/ປີ.



- **ຂໍ້ສະເໜີ:**
  - ສະເໜີໃຫ້ບໍລິສັດ ແຕ່ງຕັ້ງພະນັກງານຮັບຜິດຊອບສິ່ງແວດລ້ອມ ເປັນຜູ້ປະສານງານກັບພະແນກ;
  - ຮຽກຮ້ອງໃຫ້ບໍລິສັດປັບປຸງບົດລາຍງານຜົນກະທົບຕໍ່ສິ່ງແວດລ້ອມຄືນໃໝ່ (2 ບົດລາຍງານສຳລັບ 2 ສັນຍາສຳປະທານ);

- ບໍລິສັດຕ້ອງໄດ້ທົບທວນກວດຄືນບັນດາເນື້ອໃນການຊ່ວຍເຫຼືອ ທ້ອງຖິ່ນທີ່ລະບຸໄວ້ໃນເອກະສານໂຄງການເບື້ອງຕົ້ນ (ເຊັ່ນກິດຈະກຳກໍ່ສ້າງເສັ້ນທາງຫຼວງຂອງແຂວງ);
- ຮຽກຮ້ອງໃຫ້ບໍລິສັດຊ່ວຍ ສ້ອມແປງເສັ້ນທາງຫຼັກຂອງປະຊາຊົນ;
- ເມື່ອບໍລິສັດຈັບ ຫຼື ກັກຕົວຜູ້ລະເມີດ, ຫ້າມບໍ່ໃຫ້ບໍລິສັດກະທຳການຮຸນແຮງກໍ່ ບາດເຈັບຕໍ່ຜູ້ລະເມີດ;
- ສະເໜີໃຫ້ບໍລິສັດສ້າງແຜນນຳໃຊ້ນໍ້າ ແລະ ຂຶ້ນທະບຽນນໍ້າບາດານຕາມລະບຽບການ;
- ໃຫ້ບໍລິສັດ ເອົາໃຈໃສ່ເຖິງບັນຫາສິ່ງເສດເຫຼືອແລະສຸຂາພິບານຢູ່ເຂດທີ່ຢູ່ອາໄສຂອງຄົນ ງານ (ສິ່ງເສດເຫຼືອ, ນໍ້າເສຍພາຍໃນຊີວິດປະຈຳວັນ ແລະ ອື່ນໆ);
- ການບຳບັດສິ່ງເສດເຫຼືອ: ສະເໜີທາງບໍລິສັດເຮັດວຽກ ສົມທົບກັບບ້ານ ຊອກຫາພື້ນທີ່ ທີ່ເໝາະສົມໃນການຈັດການບຳບັດສິ່ງເສດເຫຼືອລວມ ແລະ ສ້າງເງື່ອນໄຂໃຫ້ບັນດາບ້ານໄດ້ນຳໃຊ້ຮ່ວມກັນ.

### 2.2.3 ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ

- **ການປະເມີນ:**
  - ບໍລິສັດໄດ້ປະຕິບັດຕາມລະບຽບກົດໝາຍ;
  - ບໍລິສັດໄດ້ຮັບການຢັ້ງຢືນ FSC ສາກົນ. →ບໍລິສັດໄດ້ປະຕິບັດວຽກງານການຄຸ້ມຄອງລະບົບບໍລິຫານທຸລະກິດເປັນຢ່າງດີ;
  - ໃນໄລຍະທີ່ຜ່ານມາ, ພະແນກໄດ້ລົງຕິດຕາມກວດກາຢ່າງຕໍ່ເນື່ອງ (2 ຄັ້ງ/ປີ) →ແລະ ກວດກາສະພາບຕົວຈິງ (ລວມທັງການເຄື່ອນໄຫວກ່ຽວກັບສວນ ແລະ ຜົນຜະລິດຢາງພາລາ).
  - ບໍລິສັດສົ່ງບົດລາຍງານປະຈຳປີໃຫ້ກັບພະແນກ;

- ເມື່ອບໍລິສັດນຳເຂົ້າ ແລະ ສົ່ງອອກສິນຄ້າແມ່ນ ໄດ້ມາຜ່ານພະແນກ ທຸກຂັ້ນຕອນຕາມລະບຽບການ;



- ເນື້ອທີ່ປູກຢາງພາລາທັງໝົດຂອງແຂວງຈຳປາສັກມີປະມານ 30,000 ເຮັກຕາ, ໃນນັ້ນ 90% ເປັນຂອງ 3 ບໍລິສັດຢາງພາລາ ແລະ 10% ເປັນຂອງບຸກຄົນພົນລະເຮືອນ. ເພື່ອຫຼຸດຜ່ອນການລັກຢາງພາລາ, ພະແນກຈະຈັດກອງປະຊຸມຮ່ວມກັບ 3 ບໍລິສັດ ເພື່ອປຶກສາຫາລືກ່ຽວກັບແຜນການເກັບຊື້ຜະລິດຕະພັນຢາງຈາກສວນບຸກຄົນ. ພ້ອມກັນນັ້ນ, ພະແນກຈະລົງກວດກາຄືນໃບອະນຸຍາດຂອງຈຸດຮັບຊື້ຢາງ (ຈຸດຮັບຊື້ ຢາງຕ້ອງມີສັນຍາກັບຊາວສວນຢາງຈິ່ງໄດ້ຮັບການອະນຸຍາດໃຫ້ດຳເນີນທຸລະກິດ);
- ເນື້ອທີ່ດິນເບື້ອງຕົ້ນທີ່ບໍລິສັດສະເໜີມາເມື່ອປະຕິບັດໂຄງການຍັງບໍ່ທັນໄດ້ຈັດສັນໃຫ້ຄົບຖ້ວນ.

- **ຂໍ້ສະເໜີ:**
  - ບໍລິສັດກຳລັງຈະສິ້ນສຸດວົງຈອນທຸລະກິດທຳອິດຂອງບໍລິສັດ →ການສະສາງສວນຢາງຈະດຳເນີນແນວໃດແລະໄມ້ທີ່ສະສາງຈະດຳເນີນການແນວໃດ? ພ້ອມກັນນັ້ນ, ໃນວົງຈອນການດຳເນີນທຸລະກິດຄັ້ງທີ 2ນີ້ ບໍລິສັດຈະປູກຕົ້ນໄມ້ຊະນິດໃດ ແລະ ແຜນການປະຕິບັດ →ຕ້ອງໄດ້ລາຍງານແຜນໃຫ້ພະແນກຮັບຮູ້;
  - ປະຊາຊົນລາວ ທີ່ມີປະເພນີພັກງານບຸນເທດສະການຕ່າງໆໃນຫຼາຍວັນ →ຫວັງວ່າບໍລິສັດຈະເຫັນອົກເຫັນໃຈຜູ້ອອກແຮງງານ ແລະພ້ອມຊ່ວຍເຫຼືອດ້ານການພັດທະນາຊຸມຊົນອ້ອມຂ້າງໂຄງການ.

### 2.2.4 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ

- **ການປະເມີນ:**

- ດຳເນີນການຕິດຕາມ 2ຄັ້ງ/ປີ;

- ຮຽກຮ້ອງໃຫ້ບໍລິສັດຈັດການສິ່ງເສດເຫຼືອ: ສິ່ງເສດເຫຼືອໃນຄົວເຮືອນປະຈຳວັນ, ວັດສະດຸໂຮງງານ, ນ້ຳເສຍຈາກການເຄື່ອນໄຫວ ຂອງໂຮງງານ, ອະນາໄມສວນ (ລະວັງບໍ່ໃຫ້ໄຟໄໝ້ລຸກລາມ);
- ໃກຈະຮອດວົງຈອນການຕັດໄມ້ ແລະ ສະສາງສວນຢາງ →ການປົກຫຸ້ມຂອງຕົ້ນໄມ້ຫຼຸດ ແລະສະພາບອາກາດກໍ່ຮ້ອນຈະຂຶ້ນ. →ຕ້ອງສ້າງແຜນການສະເພາະ ແລະ ລາຍງານໃຫ້ພະແນກ ແລະ ຂະແໜງການກ່ຽວຂ້ອງຮັບຮູ້;
- ໃຫ້ເອົາໃຈໃສ່ວຽກງານ ການຄຸ້ມຄອງສິ່ງເສດເຫຼືອ;
- ການປະຕິບັດການຈູດປ້ອງກັນໄຟໄໝ້ ໃນທ້າຍລະດູການ, →ເອົາໃຈໃສ່ເຖິງບັນຫາປ້ອງກັນອັກຄີໄຟ;
- ປະຈຸບັນຍັງບໍ່ທັນມີໜ່ວຍບໍລິການເກັບຂີ້ເຫຍື້ອ, ຂີ້ເຫຍື້ອ



ບໍ່ທັນມີຈຸດລວມເພື່ອຈັດການບຳບັດ.

- **ຂໍ້ສະເໜີ:**

- ການຈັດປະເພດສິ່ງເສດເຫຼືອ, ຊອກຫາພັນທະມິດບໍລິການດ້ານການເກັບ ແລະ ບຳບັດສິ່ງເສດເຫຼືອ;
- ຕາມກົດລະບຽບ, ບໍລິສັດຕ້ອງສົ່ງບົດລາຍງານແຕ່ລະໄລຍະ (ທຸກໆ 6 ເດືອນ, ທຸກໆ1ປີ);
- ສະເໜີໃຫ້ບໍລິສັດສ້າງ ແລະ ສົ່ງແຜນການສະສາງສວນຢາງມາທີ່ພະແນກ ແລະ ເມື່ອຈັດຕັ້ງປະຕິບັດກໍລາຍງານໃຫ້ພະແນກຮັບຮູ້;

- ຕ້ອງແຕ່ງຕັ້ງໃຫ້ມີພະນັກງານວິຊາສະເພາະຕິດຕາມ ແລະ ປັບປຸງ ອັບເດດຂໍ້ມູນລະບຽບກົດໝາຍ ແລະ ປະສານສົມທົບກັບບັນດາພະແນກ, ຂະແໜງການກ່ຽວຂ້ອງ;
- ປະຕິບັດນະໂຍບາຍຕໍ່ຜູ້ອອກແຮງງານຕາມລະບຽບການ;
- ກໍລະນີມີຜູ້ລະເມີດລັກຢາງພາລາ,
  →ໃຫ້ຮ່ວມມືກັບອໍານາດການປົກຄອງທ້ອງຖິ່ນແກ້ໄຂຄະດີ, ຫ້າມກະທໍາຮຸນແຮງເຮັດໃຫ້ຜູ້ລະເມີດຖືກບາດເຈັບ;
- ສະໜັບສະໜູນຊ່ວຍພາພະແນກ ໄປຢ້ຽມຢາມຕົວຈິງທີ່ພາກສະໜາມຂອງບໍລິສັດ.

## III. ສະຫຼຸບ

ໃນໄລຍະຜ່ານມາ, ເຖິງວ່າຈະມີການປ່ຽນແປງໃໝ່ດ້ານການຈັດຕັ້ງ ແລະ ບຸກຄະລາກອນກໍ່ຕາມ, ແຕ່ການນໍາ ແລະ ພະນັກງານຂອງບໍລິສັດ Daklaoruco ຍາມໃດກໍມີຄວາມສະໝານສາມັກຄີກັນ, ຜ່ານຜ່າຄວາມຫຍຸ້ງຍາກ, ກ້າວໄປສູ່ການຄຸ້ມຄອງ ແລະ ດໍາເນີນທຸລະກິດປ່າແບບຍືນຍົງ. ວຽກງານບໍລິຫານ ແລະ ການຈັດຕັ້ງທຸລະກິດຂອງບໍລິສັດໄດ້ຮັບການຕີລາຄາສູງຈາກພາກສ່ວນກ່ຽວຂ້ອງຈາກແຂວງເຖິງຂັ້ນບ້ານ ແລະ ຜູ້ອອກແຮງງານ. ເຊິ່ງສະແດງໃຫ້ເຫັນ ດັ່ງລຸ່ມນີ້:

### 1. ກິດຈະກໍາທີ່ນໍາມາສູ່ຜົນກະທົບທາງບວກໃນການຄຸ້ມຄອງປ່າໄມ້

a. ວຽກງານການຜະລິດ ແລະ ທຸລະກິດຂອງບໍລິສັດໄດ້ປະຕິບັດຕາມກົດໝາຍຂອງ ສປປ ລາວ ແລະ ສ.ສ ຫວຽດນາມ;

b. ໄດ້ຜັນຂະຫຍາຍ ແລະ ປະຕິບັດນະໂຍບາຍການຊ່ວຍເຫຼືອແທ້ຈິງໃຫ້ແກ່ຜູ້ອອກແຮງງານ ເພື່ອຊ່ວຍໃຫ້ເຂົາ ເຮັດວຽກຢ່າງຕັ້ງໜ້າ, ເປັນຕົ້ນແມ່ນເງິນເດືອນ, ເງິນອຸດໜູນ, ເງິນລາງວັນ, ອຸດໜູນອາຫານສິ່ງຈໍາເປັນ, ຖອກປະກັນແຮງງານ, ຊ່ວຍນໍ້າມັນເຊື້ອໄຟ ແລະ ອື່ນໆ;

c. ໄດ້ມີແຜນການສະເພາະໃນການ ຊ່ວຍເຫຼືອອຸດໜູນ ຜູ້ອອກແຮງງານ ໃນດ້ານຄວາມປອດໄພໃນການຜະລິດເຊັ່ນ: ດ້ານການແນະນໍາຄວາມປອດໄພຂອງແຮງງານ, ມີປ້າຍບອກເຂດທີ່ມີງູພິດ; ມາດຕະການຄວາມປອດໄພໃນລະດູຝົນພະຍຸ...

d. ປະສານສົມທົບກັນຢ່າງດີກັບອໍານາດການປົກຄອງທ້ອງຖິ່ນ ແລະ ກໍາລັງປ້ອງກັນຄວາມສະຫງົບທ້ອງຖິ່ນ, ຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພສັງຄົມ; ປ້ອງກັນການກໍ່ກວນແລະການລັກຢາງທໍາລາຍການຜະລິດ;

e. ໄດ້ປະສານສົມທົບກັນຢ່າງດີກັບອຳນາດການປົກຄອງທ້ອງຖິ່ນ ແລະ ກຳລັງປ້ອງກັນຄວາມສະຫງົບ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ແຫຼ່ງນໍ້າ ໃນເຂດໂຄງການ;

f. ໄດ້ກໍ່ສ້າງ ແລະ ກຳລັງສືບຕໍ່ກໍ່ສ້າງເຂດເຮືອນພັກຄົນງານ ໂດຍປະຕິບັດຕາມລະບຽບຂອງບໍລິສັດ ແລະ ກົດໝາຍຂອງ ສປປ ລາວຢ່າງເຂັ້ມງວດ ຄື: ການຮັກສາຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ, ການປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນໍ້າ, ການຄຸ້ມຄອງສິ່ງເສດເຫຼືອ ແລະ ອື່ນໆ.

g. ໄດ້ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອປົກປັກຮັກສາ ແລະ ຄຸ້ມຄອງເນື້ອທີ່ດິນ ທີ່ລັດຖະບານແຫ່ງ ສປປ ລາວ ໃຫ້ສຳປະທານຢ່າງຖືກຕ້ອງ;

h. ມີປະກອບສ່ວນ ຊ່ວຍຢ່າງມີປະສິດທິຜົນ ຊ່ວຍອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ພັດທະນາເສດຖະກິດ - ສັງຄົມ.

## 2. ບັນດາຜົນກະທົບທາງລົບທີ່ຈຳເປັນຕ້ອງສືບຕໍ່ປັບປຸງ

a. ປະກົດການຫຍໍ້ທໍ້ການລັກຢາງ ຍັງສືບຕໍ່ເກີດຂຶ້ນ ເຖິງວ່າບໍລິສັດຈະມີມາດຕະການ ປ້ອງກັນ, ໂດຍສະເພາະແມ່ນໄດ້ມີການປະສານງານ ກັບໜ່ວຍງານປ້ອງກັນຄວາມສະຫງົບທ້ອງຖິ່ນ;

b. ບັນດາເນື້ອທີ່ຕົວແບບ ລະບົບນິເວດພື້ນເມືອງ, ແລວທາງປ້ອງກັນສາຍນໍ້າ ແລະ ແລວທາງຊີວະນາໆພັນ ຍັງຖືກປະຊາຊົນບຸກລຸກ;

c. ບັນດາພື້ນທີ່ສະເພາະສຳລັບຈັດການຂີ້ເຫຍື້ອ: ໃນປ່າ, ໃນເຂດທີ່ຢູ່ອາໃສ ເຂດເຕົ້າໂຮມຢາງ ຍັງບໍ່ໄດ້ຮັບການອະນາໄມຕາມລະບຽບການ;

d. ຕ້ອງສືບຕໍ່ຍົກສູງຊີວິດການເປັນຢູ່ໃຫ້ບັນດາເຂດທີ່ຢູ່ອາໄສຂອງຜູ້ອອກແຮງງານໃຫ້ດີຂຶ້ນ.

3. ບັນດາຂໍ້ສະເໜີຈາກພາກສ່ວນກ່ຽວຂ້ອງ ຜູ້ອຳນວຍການ ແລະ ຄະນະບໍລິຫານຂອງບໍລິສັດ Daklaoruco ຂໍນ້ອມຮັບເອົາ, ພື່ອເປັນພື້ນຖານໃນການສືບຕໍ່ປັບປຸງວຽກງານການຄຸ້ມຄອງບໍລິຫານ ໃຫ້ສອດຄ່ອງແທດເໝາະກັບຂໍ້ກຳນົດຂອງ FSC ແລະ ຕາມລະບຽບກົດໝາຍ.

*ປາກເຊ, ວັນທີ 23 /4/ 2025*

**ໜ່ວຍງານທີ່ປຶກສາເຕັກນິກ**

**ສະຖາບັນຄຸ້ມຄອງປ່າໄມ້ຍືນຍົງ ແລະ ຢັ້ງຢືນປ່າໄມ້ (SFMI)**

## ເອກະສານຊ້ອນທ້າຍ 1. ລາຍຊື່ບຸກຄົນ ແລະ ໜ່ວຍງານທີ່ໄດ້ສໍາພາດ

| ລດ | ຊື່ແລະນາມສະກຸນ | ຕໍາແໜ່ງ-ສັງກັດ | ໜ່ວຍງານ |
|---|---|---|---|
| ຜູ້ອອກແຮງງານ | | | |
| 1. | ເລອັນຄວາ | ຫົວໜ້າຫ້ອງ-ຫ້ອງເຕັກນິກ | ນິຄົມ 1 |
| 2. | ເຈີ່ຍວັນເຕື່ອງ | ຫົວໜ້າຈຸປ້ອງກັນ | |
| 3. | ໂສດາວັນ ສຸໂຄດ | ຫ້ອງບັນຊີ | |
| 4. | ດັ້ງທິທັນຫ່ຽວ | ຫ້ອງບໍລິຫານ | |
| 5. | ສາຍລົມ ສີສົມຫວັງ | ຫົວໜ້າຈຸ 2 | |
| 6. | ນາງ ເປີ້ຍ ສີອາລຸນ | ກໍາມະກອນຂີດຢາງ | |
| 7. | ມົນລີດີ | ກໍາມະກອນຂີດຢາງ | |

| | | | |
|---|---|---|---|
| 8. | ຄຳພອນ ໄກພົນ | ກຳມະກອນຂີດຢາງ | |
| 9. | ທ້າວຈັນ | ກຳມະກອນຂີດຢາງ | |
| 10. | ນາງມີ | ກຳມະກອນຂີດຢາງ | |
| 11. | ສຸດາ | ກຳມະກອນຂີດຢາງ | |
| 12. | ໂຮ່ວັນເຢືອກ | ຫ້ອງເຕັກນິກ | ນິຄົມ 2 |
| 13. | ຮ່ວາງຈາງຝີ | ຈຸປ້ອງກັນ | |
| 14. | ດາ ສີສະໝຸດ | ກຳມະກອນຂີດຢາງ | |
| 15. | ທ້າວ ປູ | ກຳມະກອນຂີດຢາງ | |
| 16. | ນາງເປ | ກຳມະກອນຂີດຢາງ | |
| 17. | ນາງເຕ້ຍ | ກຳມະກອນຂີດຢາງ | |
| 18. | ທ້າວເຜນ | ກຳມະກອນຂີດຢາງ | |
| 19. | ທ້າວເຈົາ | ກຳມະກອນຂີດຢາງ | |
| 20. | ທ້າວໄຊ | ກຳມະກອນຂີດຢາງ | |
| 21. | ຊາວບຸນ ເຈີມ ອະດອັງ | ຫ້ອງເຕັກນິກ | ນິຄົມ 3 |
| 22. | ເລທິຖຸຍຮ່າ | ຫ້ອງບັນຊີ | |
| 23. | ສຸກສະຫວັນ ສີພິໄລ | ກຳມະກອນຂີດຢາງ | |
| 24. | ທະມະວັນ | ກຳມະກອນຂີດຢາງ | |
| 25. | ທຳມີ ຄູນດົ້ | ກຳມະກອນຂີດຢາງ | |
| 26. | ໂງຫັ້ນອຽນ | ຫ້ອງບັນຊີ | ນິຄົມ 4 |
| 27. | ຫີ່ນທິງເຮີນ | ຫ້ອງເຕັກນິກ | |
| 28. | ຮ່ວາງດິ່ງເອື້ອງ | ຫົວໜ້າຈຸ 8 | |
| 29. | ທ້າວທ່າ | ກຳມະກອນຂີດຢາງ | |
| 30. | ພຸດ ລາຄະລາດ | ກຳມະກອນຂີດຢາງ | |
| 31. | ພົນ | ກຳມະກອນຂີດຢາງ | |
| 32. | ແຈັກ ອາສາ | ກຳມະກອນຂີດຢາງ | |

| | | | |
|---|---|---|---|
| 33. | ສີພັນ ໄຊຍະວົງສີ | ກຳມະກອນຂີດຢາງ | |
| 34. | ນາງບາ | ກຳມະກອນຂີດຢາງ | |
| **ຊຸມຊົນທີ່ຢູ່ອາໄສ** | | | |
| 35. | ວິລາວັດ ຈັນປະສານ | ນາຍບ້ານ | ບ້ານລິ່ມສັກເໜືອ |
| 36. | ບຸນທັນ ແກ້ວສຸພາ | ນາຍບ້ານ | ບ້ານ ນາສາຍຄຳ |
| 37. | ເພັດສະໝອນ | ນາຍບ້ານ | ບ້ານຫຼັກ 11 |
| 38. | ຕົ້ນມີໄຊ | ນາຍບ້ານ | ບ້ານສອງຫ້ອງນ້ອຍ |
| 39. | ຍົມມະລາ | ນາຍບ້ານ | ບ້ານນາແຊ |
| 40. | ທ້າວບຸນປອນ | ນາຍບ້ານ | ບ້ານສອງຫ້ອງໃຫ່ຍ |
| 41. | ກົກ້ອນ ຈັນສີ | ນາຍບ້ານ | ບ້ານນ້ຳໃສເທິງ |
| 42. | ຕຽງຄຳ ຄົມວິໄລ | ນາຍບ້ານ | ບ້ານດົງຫຼວງ |
| **ອົງການປົກຄອງທ້ອງຖິ່ນ** | | | |
| 43. | ສີວັນປະກອນ ວົງບຸນທັນ | ຫົວໜ້າພະແນກ | ພະແນກກະສິກຳ ແລະ ປ່າໄມ້ ແຂວງສາລະວັນ |
| 44. | | ຫົວໜ້າພະແນກ | ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ |
| 45. | | ຫົວໜ້າພະແນກ | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສາລະວັນ |
| 46. | ໄຊຍະສິດ | ຮອງຫົວໜ້າພະແນກ | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ |

## ເອກະສານຊ້ອນທ້າຍ 2. ຮູບພາບທີ່ນໍາມາສູ່ຜົນກະທົບທາງບວກຈາກວຽກງານຄຸ້ມຄອງປ່າ

*ຮູບພາບນໍາໃຊ້ສະແດງໃນບົດລາຍງານແມ່ນມາຈາກ: ດ່າວກົງແຄັງ, ໂດ໋ທ້ຽນເຫງຍ, ດັ້ງດິງຟຸ່ງ, ເຈີ່ນດຶກບິ່ງ, ຕື່ວັນອ໋ຽນ, ດັ້ງທິທັນຫ໋ຽວ ແລະ ຈ່ອຍ ສຸກສະຫວັນ…*

## ພິທີເປີດລະດູຂູດຄົ້ນຂີດຢາງປີ 2025 ຂອງ ນິຄົມ1.





















ຮູບພາບສົມທົບກັບອຳນາດການປົກຄອງ ແລະ ກຳລັງປ້ອງກັນຄວາມສະຫງົບທ້ອງຖິ່ນ ໃນການຮັກສາ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານການລັກຢາງແລະ ປະກົດການຫຍໍ້ທໍ້ໃນສັງຄົມ.














## ຮູບພາບການອຸດໜູນຊ່ວຍເຫຼືອຜູ້ອອກແຮງງານດ້ວຍປັດໃຈວັດຖຸ


















ໂຮງງານປຸງແຕ່ງ
NHÀ MÁY CHẾ BIẾN
ສະໜັບສະໜູນສິ່ງຂອງຈຳເປັນໃຫ້ກຳມະກອນ
HỖ TRỢ NHU YẾU PHẨM CHO CÔNG NHÂN





*ພາບເຄື່ອງແບບປ້ອງກັນແຮງງານທີ່ບໍລິສັດໄດ້ສະໜອງໃຫ້ກຳມະກອນ ແລະ ກຳລັງປ້ອງກັນສວນ.*



*ລະບົບສາງວັດສະດຸ, ສານເຄມີທີ່ໄດ້ຈັດວາງຢ່າງກະທັດຮັດ ແລະ ເປັນລະບຽບຮຽບຮ້ອຍຕາມລະບຽບການ.*







*ເງື່ອນໄຂພື້ນຖານໂຄງລ່າງຂອງເຂດທີ່ພັກລວມ ຂອງຜູ້ອອກແຮງງານທີ່ໄດ້ຮັບການປັບປຸງ.*





